ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----=====000=====----

ຕະຫຼາດຫຼັກຊັບລາວ
LAO SECURITIES EXCHANGE

ເລກທີ 171 /ຕລຊລ

ນະຄອນຫຼວງວຽງຈັນ, ວັນທີ 23 ມິຖຸນາ 2014

# ແຈ້ງການ

- ອີງຕາມການປຶກສາຫາລື ແລະ ເຫັນດີເປັນເອກະພາບຂອງກອງປະຊຸມພາກປະຕິບັດການເປີດເຜີຍຂໍ້ມູນ ຄັ້ງທີ 7, ວັນທີ 19 ມິຖຸນາ 2014;
- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນເລກທີ 007/ຄຄຊ, ລົງວັນທີ 3 ເມສາ 2014.

**ຕະຫຼາດຫຼັກຊັບລາວ (ຕລຊລ)** ຂໍແຈ້ງມາຍັງບັນດາບໍລິສັດ ຈົດທະບຽນຮຸ້ນ ໃນ ຕລຊລ ແລະ ພາກສ່ວນທີ່ກ່ຽວຂ້ອງຮັບຊາບວ່າ ການເປີດເຜີຍໃບຖານະການເງິນ 6 ເດືອນຕົ້ນປີ ນັບແຕ່ປີ 2014 ເປັນຕົ້ນໄປ, ຕລຊລ ໄດ້ຕົກລົງໃຫ້ບັນດາບໍລິສັດ ຈົດທະບຽນຮຸ້ນ ນຳສົ່ງໃບຖານະການເງິນດັ່ງກ່າວ ພ້ອມທັງເປີດເຜີຍຜ່ານລະບົບເປີດເຜີຍຂໍ້ມູນ ແລະ ເວບໄຊ້ ຕລຊລ ຈາກ 45 ວັນມາເປັນ 60 ວັນ, ຕາມທີ່ໄດ້ກຳນົດໄວ້ໃນມາດຕາທີ 12 ຂອງລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ, ສະບັບເລກທີ 22/ຕລຊລ, ລົງວັນທີ 07 ມັງກອນ 2011.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການນີ້ຈົນກ່ວາຈະມີການປ່ຽນແປງ.

ດ້ວຍຄວາມເຄົາລົບ ແລະ ນັບຖື,

**ປະທານຄະນະ**

**ຫົວໜ້າໃຫຍ່ຜູ້ບໍລິຫານ**

ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ
Lao Securities Exchange Co.,Ltd

**ຮສ. ເດດພູວັງ ມູລຣັຕນ໌**

<u>ບ່ອນນຳສົ່ງ</u>

1. ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ 1 ສະບັບ;
2. ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ 1 ສະບັບ;
3. ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ 1 ສະບັບ;
4. ບໍລິສັດລາວເວີນ ມະຫາຊົນ 1 ສະບັບ.